ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການຕ່າງປະເທດ

ຫ້ອງການ

ເລກທີ: 1497

ນະຄອນຫຼວງວຽງຈັນ, ວັນທີ 30 APR 2025

# ຫນັງສືແຈ້ງເຊີນປະມູນ

1. ກະຊວງການຕ່າງປະເທດ ຂໍເຊີນບັນດາ ອູ່ / ບໍລິສັດ ທີ່ສົນໃຈ ແລະ ມີຄຸນນະວຸດທິເຫມາະສົມ ເຂົ້າຍື່ນຊອງປະມູນ ສໍາລັບສະຫນອງ **ການສ້ອມແປງພາຫະນະລົດ ຂອງ ກະຊວງການຕ່າງປະເທດ ປະຈໍານະຄອນຫຼວງວຽງຈັນ ປະຈໍາປີ 2025.**
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກໍານົດໄວ້ຢູ່ໃນ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຈັດຊື້ - ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ ອະນຸຍາດໃຫ້ທຸກໆ ອູ່/ບໍລິສັດ ທີ່ມີຄຸນນະວຸດທິເຫມາະສົມ.
4. ເອກະສານປະມູນຄົບຊຸດທີ່ເປັນພາສາລາວສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈໂດຍການຍື່ນຫນັງສືສະເຫນີຫາທີ່ຢູ່ຂ້າງລຸ່ມນີ້ (7), ເລີ່ມແຕ່ວັນທີ **30/04/2025 – 23/05/2025** ເປັນຕົ້ນໄປ, ໃນລາຄາ **1,000.000** ກີບຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ວິທີການຊໍາລະຕ້ອງຈ່າຍເປັນ **ເງິນສົດ.**
5. ຊອງປະມູນຕ້ອງສົ່ງຕາມສະຖານທີ່ດັ່ງລຸ່ມນີ້ (7), ໃນ **ເວລາ 13:30 ໂມງ, ວັນທີ 27/05/2024 .** ສໍາລັບຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ອະນຸຍາດ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ **ເວລາ 14:00 ໂມງ, ວັນທີ 27/05/2024 ຢູ່ທີ່ ຫ້ອງປະຊຸມ ຊັ້ນ III ຕຶກ B,** ໂດຍຊ່ອງຫນ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ.
6. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫລື ຫນັງສືຄໍ້າປະກັນການປະມູນຈາກທະນາຄານ, ຊຶ່ງມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງ ລາຄາປະມູນມາພ້ອມ.
7. ທີ່ຢູ່ຕາມທີ່ລະບຸໄວ້ຢູ່ຂ້າງເທິງແມ່ນ:

   ພະແນກບໍລິຫານ, ຫ້ອງການ, ກະຊວງການຕ່າງປະເທດ

   ຖະໜົນ 23 ສິງຫາ, ບ້ານ ໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ

   ໂທລະສັບ: 021 416572

**ຫົວໜ້າຫ້ອງການ**

ຫ້ອງການ

ບົວອນທັດ ດວງຈັກ